# ແກມຊິວ (GAMCIL)

**ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ**

## ກອງປະຊຸມຜູ້ປະສານງານໂຄງການຂັ້ນແຂວງ

ໃນລະຫວ່າງວັນທີ 13-27 ມິຖຸນາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ລາວ ແລະ ໂຄງການ ແກມຊິວ ໄດ້ຈັດກອງປະຊຸມຜູ້ປະສານງານຂັ້ນແຂວງຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 20 ທ່ານ. ຈຸດປະສົງໃນການຈັດກອງປະຊຸມໃນຄັ້ງນີ້ ກໍແມ່ນເພື່ອ ເປັນການພົບປະກັບຄູ່ຮ່ວມງານຫຼັກປະຈຳແຕ່ລະແຂວງ ຂອງໂຄງການ ເພື່ອຮ່ວມກັນແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳໃນໄລຍະທີ່ຜ່ານມາ, ລາຍງານຜົນສຳເລັດ ແລະ ສິ່ງທ້າທາຍຕໍ່ກັບການຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການ ແລະ ລາຍງານແຜນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ທີ່ຈະເຮັດຮ່ວມກັນໃນປີທີ່ຕໍ່ໄປ.

ນອກຈາກນັ້ນ, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ກໍໄດ້ເຮັດໜັງສືການຄັດເລືອກຜູ້ປະສານງານຫຼັກຂອງໂຄງການ ແລະ ສົ່ງແຈ້ງໃຫ້ແກ່ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທັງສາມແຂວງ ໃຫ້ຄັດເລືອກເອົາຕາງໜ້າຜູ້ປະສານງານ ຂອງໂຄງການ ປະຈຳແຕ່ລະແຂວງ ເພື່ອໃຫ້ບັນດາທ່ານສາມາດສະໜັບສະໜູນດ້ານການປະສານງານ ແລະ ຈັດຕັ້ງປະຕິບັດກິດຈະກຳຮ່ວມກັບໂຄງການໃນຕະຫຼອດໄລຍະເວລາຂອງໂຄງການ.



ກອງປະຊຸມຜູ້ປະສານງານໂຄງການຂັ້ນແຂວງ ທີ່ ແຂວງ ຈຳປາສັກ



ກອງປະຊຸມຜູ້ປະສານງານໂຄງການຂັ້ນແຂວງ ທີ່ ແຂວງ ຫຼວງພະບາງ




## ການເກັບຂໍ້ມູນເບື້ອງຕົ້ນ ຂອງໂຄງການ

ໃນລະຫວ່າງວັນທີ 13-27 ມິຖຸນາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ລາວ ແລະ ໂຄງການ ແກມຊິວ ໄດ້ມີການເກັບກຳຂໍ້ມູນເບື້ອງຕົ້ນຂອງໂຄງການ ຢູ່ທີ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 67 ທ່ານ, ແບບເຊິ່ງໜ້າ 54 ທ່ານ ແລະ ແບບອອນລາຍ 13 ທ່ານ ໂດຍທີ່ຜູ້ເຂົ້າຮ່ວມຕອບແບບສອບຖາມ ແມ່ນມາຈາກຫຼາຍພາກສ່ວນເຊັ່ນ ຄູ່ຮ່ວມງານນັກຂ່າວພາກລັດ, ພາກສື່ສັງຄົມ, ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ ແລະ ຜູ້ສ້າງວິດີໂອ ແລະ ຮູບເງົາ. ໂຄງການແມ່ນໄດ້ນຳໃຊ້ແບບສອບຖາມທັງໝົດ 3 ແບບ ທີ່ສ້າງຈາກເຄື່ອງມືໂຄໂບ້ທູບ໋ອກ (KOBO Toolbox).

ການເກັບກຳຂໍ້ມູນໃນຄັ້ງນີ້ ໄດ້ຊ່ວຍໃຫ້ໂຄງການສາມາດກຳນົດຂອບເຂດບູລິມະສິດຂອງໂຄງການ, ເຂົ້າໃຈໃນຜົນກະທົບຂອງໂຄງການ, ສາມາດບັດທຶກຕົວຊີ້ວັດທີ່ສຳຄັນ, ເພື່ອເປັນຂໍ້ມູນເບື້ອງຕົ້ນໃນການຕິດຕາມ ແລະ ປະເມີນຄວາມຄືບໜ້າ ແລະ ປະສິດທິຜົນໃນລະຫວ່າງການຈັດຕັ້ງປະຕິບັດ ແລະ ສິ້ນສຸດໂຄງການ.



ການສຳພາດເພື່ອເກັບກຳຂໍ້ມູນເບື້ອງຕົ້ນ ຂອງໂຄງການ ທີ່ແຂວງ ຫຼວງພະບາງ



ການສຳພາດເພື່ອເກັບກຳຂໍ້ມູນເບື້ອງຕົ້ນ ຂອງໂຄງການ ທີ່ແຂວງ ຈຳປາສັກ




## ສະເຫຼີມສະຫຼອງ ວັນສື່ມວນຊົນລາວ ຄົບຮອບ 74 ປີ

ໃນວັນທີ 2 ສິງຫາ 2024, ອົງການແຄຣ໌ ລາວ ແລະ ໂຄງການ ແກມຊິວ ໄດ້ເຂົ້າຮ່ວມ ພິທີສະເຫຼີມສະຫຼອງ ວັນສື່ມວນຊົນລາວ ຄົບຮອບ 74 ປີ ໃນຫົວຂໍ້ **"ການນຳໃຊ້ປັນຍາປະດິດ ແລະ ສິ່ງທ້າທາຍຂອງສື່ສັງຄົມອອນລາຍສຳລັບສື່ມວນຊົນລາວ"** ເຊິ່ງຈັດໂດຍ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ທີ່ ນະຄອນຫຼວງວຽງຈັນ ໂດຍມີຜູ້ເຂົ້າຮ່ວມໃນພິທີສະເຫຼີມສະຫຼອງ ທັງຮູບແບບເຊິ່ງໜ້າ ແລະ ອອນລາຍ ຫຼາຍກວ່າ 200 ທ່ານ ໃນທົ່ວປະເທດ. ພາຍໃນງານໄດ້ມີການສົນທະນາໃນຫົວຂໍ້ "ການນຳໃຊ້ ປັນຍາປະດິດ ຊ່ວຍສື່ມວນຊົນ; ການນຳໃຊ້ປັນຍາປະດິດ ເຂົ້າໃນວຽກງານຂ່າວ ແລະ ຈັນຍາບັນ; ວິທີນຳໃຊ້ຄຸນປະໂຫຍດ ແລະ ຄວາມປອດໄພການໃຊ້ສື່ສັງຄົມອອນລາຍ; ແລະ ຄວາມສຳຄັນຂອງການພັດທະນາຍືນຍົງສີຂຽວ."

ສະນັ້ນ, ເພື່ອຊ່ວຍໃຫ້ນັກຂ່າວລາວ ສາມາດນຳໃຊ້ເຄື່ອງມືເຕັກໂນໂລຊີ ເຂົ້າໃນການຜະລິດສື່ດິຈິຕອນ, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ແລະ ໂຄງການ ແກມຊິວ ຈຶ່ງໄດ້ເຮັດວຽກຮ່ວມກັບຫຼາຍໆພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະນັກຂ່າວລາວ ໃນການສະໜັບສະໜູນການແກ້ໄຂຊ່ອງວາງ ດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮັບຮູ້ທາງດ້ານສື່ດິຈິຕອນ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ ແລະ ການພັດທະນາສີຂຽວ.



ການສຳພາດ ທ່ານ ສົມສະຫວາດ ພົງສາ ຕໍ່ກັບງານສະເຫຼີມສະຫຼອງ ວັນສື່ມວນຊົນລາວ



ການເຂົ້າຮ່ວມພິທີສະເຫຼີມສະຫຼອງ ວັນສື່ມວນຊົນລາວ ຜ່ານທາງອອນລາຍ




## ການປະເມີນຄວາມຕ້ອງການຝຶກອົບຮົມ

ໃນວັນທີ 5-7 ສິງຫາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ລາວ, ໂຄງການ ແກມຊິວ ແລະ ຊ່ຽວຊານ ໄດ້ຈັດກອງປະຊຸມ ການປະເມີນຄວາມຕ້ອງການຝຶກອົບຮົມແບບເຊິ່ງໜ້າ ຢູ່ທີ່ ນະຄອນຫຼວງວຽງຈັນ ແລະ ແຂວງ ຫຼວງພະບາງ ໂດຍມີຜູ້ເຂົ້າຮ່ວມ 58 ທ່ານ ແລະ ໄດ້ເຮັດການປະເມີນແບບອອນລາຍ ທີ່ແຂວງ ຈຳປາສັກ ໂດຍມີຜູ້ເຂົ້າຮ່ວມການປະເມີນ 30 ທ່ານ. ຈຸດປະສົງກໍແມ່ນເພື່ອ ປະເມີນຄວາມຕ້ອງການການຝຶກອົບຮົມຂອງນັກຂ່າວລາວ, ສະໜອງຂໍ້ມູນກ່ຽວກັບຄວາມຕ້ອງການ ການຝຶກອົບຮົມ ແລະ ການນຳໃຊ້ຂໍ້ມູນຂ່າວສານ ເພື່ອພັດທະນາຫຼັກສູດໃຫ້ແທດເໝາະກັບຄວາມຕ້ອງການຕົວຈິງ ຂອງນັກຂ່າວລາວ.

ພາຍຫຼັງທີ່ສຳເລັດການປະເມີນແລ້ວ, ສະມາຄົມນັກຂ່າວແຫ່ງ ສປປ ລາວ, ອົງການແຄຣ໌ ລາວ, ໂຄງການ ແກມຊິວ ແລະ ຊ່ຽວຊານ ກໍໄດ້ເຮັດວຽກຮ່ວມກັນ ເພື່ອສ້າງ ແລະ ພັດທະນາຫຼັກສູດ ການຮຽນການສອນ ທີ່ເໝາະສົມທັງຮູບແບບເຊິ່ງໜ້າ ແລະ ແບບອອນລາຍ ຜ່ານເວັບໄຊ ຂອງສະມາຄົມນັກຂ່າວ ແຫ່ງ ສປປ ລາວ. ພ້ອມກັນນັ້ນ, ຫຼັກສູດດັ່ງກ່າວກໍຈະໄດ້ຖືກເອົາມາຝຶກອົບຮົມໃຫ້ແກ່ນັກຂ່າວລາວ ເພື່ອຊ່ວຍເພີ່ມຄວາມຮັບຮູ້ທາງດ້ານສື່ດີຈິຕອນ ແລະ ເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ ແລະ ການພັດທະນາສີຂຽວ.



ການປະເມີນຄວາມຕ້ອງການຝຶກອົບຮົມ ທີ່ ນະຄອນຫຼວງວຽງຈັນ



ການປະເມີນຄວາມຕ້ອງການຝຶກອົບຮົມ ທີ່ ແຂວງ ຫຼວງພະບາງ



## ກອງປະຊຸມ ສະຫຼຸບ 6 ເດືອນຕົ້ນປີ ແລະ ວາງແຜນການ 6 ເດືອນ ທ້າຍປີ 2024

ໃນວັນທີ 29 ສິງຫາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ລາວ ແລະ ໂຄງການ ແກມ ຊີວ ໄດ້ຈັດກອງປະຊຸມ ສະຫຼຸບ 6 ເດືອນຕົ້ນປີ ແລະ ວາງ ແຜນການ 6 ເດືອນ ທ້າຍປີ 2024 ທີ່ ນະຄອນຫຼວງ ວຽງຈັນ. ເຊິ່ງເປັນກຽດເຂົ້າຮ່ວມເປັນປະທານ ໂດຍ ທ່ານ ໂພສີ ແກ້ວມະນີວົງ, ຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພ້ອມ ດ້ວຍການເປັນປະທານຮ່ວມ ຂອງ ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອະດີດ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ທ່ານ ປອ ອາຈິດ ປາຣິດາ, ອຳນວຍການຝ່າຍແຜນງານ, ອົງການແຄຣ໌ ລາວ ພ້ອມດ້ວຍຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ລວມທັງໝົດ 40 ທ່ານ. ພາຍໃນກອງປະຊຸມແມ່ນໄດ້ມີ ການສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຂອງໂຄງການ ໃນ 3 ແຂວງເປົ້າໝາຍກໍຄື ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ ໃນໄລຍະທີ່ຜ່ານມາ. ນອກຈາກນັ້ນ, ຜູ້ເຂົ້າ ຮ່ວມທຸກທ່ານ ກໍຍັງໄດ້ມີການສົນທະນາ ເພື່ອປັບປຸງບົດ ລາຍງານ ແລະ ໃຫ້ຄຳແນະນຳ ເພື່ອວາງແຜນການຈັດຕັ້ງ ປະຕິບັດກິດຈະກຳໃນອີກ 6 ເດືອນຕໍ່ໜ້າ ໃຫ້ມີຄວາມ ແທດເໝາະ ແລະ ໃຫ້ປະສົບຜົນສຳເລັດທັນຕໍ່ກັບເວລາທີ່ ກຳນົດໄວ້.



ການໃຫ້ຄຳເຫັນຂອງ ທ່ານ ສະຫວັນຄອນ ຣາຊມຸນຕຣີ ໃນກອງປະຊຸມ



ທ່ານ ທອງຫຼໍ່ ດວງສະຫວັນ ໄດ້ລາຍງານແຜນການຈັດຕັ້ງປະຕິບັດກິດຈະກຳ ໃນອີກ 6 ເດືອນຕໍ່ໜ້າ ຂອງໂຄງການ

## ທ່ານ ໂພສີ ແກ້ວມະນີວົງ, ຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

"ໂຄງການດັ່ງກ່າວນີ້ ຈະຊ່ວຍນຳຜົນປະໂຫຍດບໍ່ໜ້ອຍມາໃຫ້ວຽກງານພັດທະນາສື່ມວນຊົນຂອງພວກເຮົາ, ດ້ວຍການເຄື່ອນໄຫວ ແລະ ການປະກອບສ່ວນຢ່າງຕັ້ງໜ້າຂອງທີມງານຈາກສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ຈາກ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່, ພາຍໃຕ້ຂອບເວລາ ແລະ ຂັ້ນຕອນຕ່າງໆທີ່ລະບຸໄວ້ໃນໂຄງການ, ເຊິ່ງຈະຊ່ວຍຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ນັກຂ່າວເຮົາ ໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບການພັດທະນາສີຂຽວແບບຍືນຍົງ ເພື່ອກະຈາຍຂໍ້ມູນຂ່າວສານໄປຍັງຜູ້ບໍລິໂພກສື່ທັງຫຼາຍໃນສັງຄົມ ໃຫ້ອວາຍໜ້າມາຮ່ວມມື, ສະໜັບສະໜູນ ແລະ ນຳເອົາໄປປະຕິບັດໃຫ້ສຳເລັດ ແລະ ສອດຄ່ອງຕາມແນວທາງການພັດທະນາຂອງພັກ-ລັດຂອງພວກເຮົາ."






## ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອະດີດຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

"ໂຄງການນີ້ຈະຊ່ວຍປະກອບສ່ວນເຮັດໃຫ້ສື່ພາກລັດ ແລະ ສື່ພາກສັງຄົມທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍຂອງລາວ ໃຫ້ໄດ້ຮັບການຍົກລະດັບທັກສະດ້ານວິຊາຊີບສື່ ລວມທັງ ການນຳໃຊ້ເຕັກໂນໂລຊີແບບດິຈິຕອນ ແລະ ສື່ແບບໃໝ່. ນັກຂ່າວທີ່ໄດ້ຮັບການຝຶກອົບຮົມຜ່ານໂຄງການນີ້ ຈະມີທັກສະ ແລະ ຄວາມສາມາດສູງຂຶ້ນໃນການຜະລິດຂໍ້ມູນຂ່າວສານທີ່ມີຄຸນນະພາບ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບກ່ຽວກັບການພັດທະນາສີຂຽວໃນ ສປປ ລາວ, ເຊິ່ງເປັນໜຶ່ງໃນວຽກບຸລິມະສິດຂອງລັດຖະບານລາວໃນການພັດທະນາປະເທດຊາດໃຫ້ນັບມື້ນັບຈະເລີນສີວິໄລແບບຍືນຍົງ."



duangsavan@gmail.com | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ